ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຈຳປາສັກ

ພະແນກອຸດສາຫະກຳ ແລະ ການຄ້າ

ເລກທີ 1552/ພອຄ

ແຂວງຈຳປາສັກ, ວັນທີ 10.7. 2026.

# ໜັງສືແຈ້ງປະມູນ

ເຖິງ: ບໍລິສັດ ກໍ່ສ້າງ ແລະ ຕິດຕັ້ງໄຟຟ້າພາຍໃນ ແລະ ຕ່າງແຂວງ

ເລື່ອງ: ການປະມູນໂຄງການກໍ່ສ້າງຕາຂ່າຍໄຟຟ້າ 0,4 KV ແລະ ຕິດຕັ້ງໝໍ້ແປງບ້ານພຽງດີ (ຄຸ້ມທາງແປ່ງ ແລະ ຄຸ້ມໜາດຂີ້ຄວາຍ) ແລະ ບ້ານນາກະສັງ (ຄຸ້ມທາງແປ່ງ) ເມືອງໂຂງ ແຂວງຈຳປາສັກ.

- ອີງຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ (ສະບັບປັບປຸງ), ສະບັບເລກທີ 72/ສພຊ, ລົງວັນທີ 15 ທັນວາ 2015.

- ອີງຕາມກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍການລົງທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017.

- ອີງຕາມແຈ້ງແຜນການລົງທຶນຂອງລັດປະຈຳປີ 2026 ຂອງແຂວງຈຳປາສັກ ຄັ້ງທີ III (ໂຄງການໃໝ່ບ້ວງເປົ້າໝາຍສະເພາະ) ສະບັບເລກທີ 1099/ກຢຂ, ລົງວັນທີ 6 ກໍລະກົດ 2026.

ພະແນກອຸດສາຫະກຳ ແລະ ການຄ້າແຂວງຂໍຖືເປັນກຽດແຈ້ງມາຍັງ ບັນດາບໍລິສັດຮັບເໝົາກໍ່ສ້າງ ແລະ ຕິດຕັ້ງໄຟຟ້າພາຍໃນ ແລະ ຕ່າງແຂວງ, ທີ່ມີຄວາມສົນໃຈ ເຂົ້າຮ່ວມປະມູນ ໂຄງການກໍ່ສ້າງຕາຂ່າຍໄຟຟ້າ 0,4 KV ແລະ ຕິດຕັ້ງໝໍ້ແປງບ້ານພຽງດີ (ຄຸ້ມທາງແປ່ງ ແລະ ຄຸ້ມໜາດຂີ້ຄວາຍ) ແລະ ບ້ານນາກະສັງ (ຄຸ້ມທາງແປ່ງ) ເມືອງໂຂງ ແຂວງຈຳປາສັກ ເຊິ່ງມີລາຍລະອຽດດັ່ງນີ້:

1. ຈະເລີ່ມຂາຍຊອງປະມູນ ນັບແຕ່ວັນທີ 10/07/2026 ຫາ ວັນທີ 13/08/2026.
2. ສະຖານທີ່ເປີດກອງປະຊຸມ: ການທາບທາມໂຄງການ ທີ່ຫ້ອງປະຊຸມພະແນກອຸດສາຫະກຳ ແລະ ການຄ້າແຂວງຈຳປາສັກ ໃນວັນທີ ........../................/ 2026, ເວລາ ................ ໂມງ.

❖ ເງື່ອນໄຂຂອງບໍລິສັດໃນການເຂົ້າຮ່ວມປະມູນ ມີດັ່ງນີ້:

1. ເປັນບຸກຄົນ, ນິຕິບຸກຄົນພາຍໃນ ແລະ ຕ່າງປະເທດ ທີ່ມີເລກປະຈຳຕົວຜູ້ເສຍອາກອນ ຫຼື ທະບຽນວິສາຫະກິດ ແລະ ໃບຢັ້ງຢືນການປະຕິບັດພັນທະພາສີ, ອາກອນ ແລະ ພັນທະອື່ນຕາມກົດໝາຍ;
2. ມີການຢັ້ງຢືນກ່ຽວກັບຜົນງານ, ປະສົບການ, ຄວາມສາມາດ ດ້ານເຕັກນິກ ວິຊາການ ແລະ ການດຳເນີນທຸລະກິດທີ່ມີຄຸນນະພາບດີ ໃນວຽກງານການກໍ່ສ້າງ ແລະ/ຫຼື ການສ້ອມແປງ, ການສະໜອງສິນຄ້າ ແລະ /ຫຼື ການບໍລິການວຽກງານ ແລະ ການບໍລິການທີ່ປຶກສາ;

สแกนด้วย CamScanner

3. ມີການຢັ້ງຢືນຖານະການເງິນ ໃນໄລຍະສອງປີຜ່ານມາ ຈາກສະຖາບັນການເງິນ ພາຍໃນ ແລະ ຕ່າງປະເທດ ແລະ/ຫຼື ບົດກວດສອບຖານະການເງິນ ປະຈຳປີ.
4. ມີຈຳນວນບຸກຄະລາກອນພຽງພໍ ທີ່ມີຄວາມຮູ້ຄວາມສາມາດ ແລະ ປະສົບການກ່ຽວກັບວຽກງານຈັດຊື້-ຈັດຈ້າງ;
5. ບໍ່ເປັນຜູ້ທີ່ມີຜົນປະໂຫຍດຊ້ຳຊ້ອນທີ່ກ່ຽວຂ້ອງກັບການຈັດຊື້-ຈັດຈ້າງດັ່ງກ່າວ ເຊັ່ນ: ເປັນຜູ້ທີ່ມີສ່ວນຮ່ວມອອກແບບ ຫຼື ກະກຽມເອກະສານໃນການປະມູນ;
6. ມີການຢັ້ງຢືນ ມາດຕະຖານ ແລະ ຈຳນວນ ກົນຈັກການຜະລິດ, ເຄື່ອງມື ແລະ ວັດຖຸອຸປະກອນການກໍ່ສ້າງ ແລະ/ຫຼື ການສ້ອມແປງ ແລະ ການສະໜອງສິນຄ້າ ແລະ /ຫຼື ການບໍລິການວຽກງານ;
7. ມີຄວາມສາມາດທາງດ້ານການປະພຶດ ຫຼື ບໍ່ຖືກສານຕັດສິນລົງໂທດຕັດອິດສະຫຼະພາບກ່ຽວກັບການດຳເນີນທຸລະກິດ.

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານຜູ້ອຳນວຍການບໍລິສັດ ເພື່ອຮັບຊາບ ແລະ ເຂົ້າຮ່ວມການປະມູນໂຄງການນີ້ດ້ວຍ.

ຫົວໜ້າພະແນກ.

ກະຊວງອຸດສາຫະກຳ ແລະ ການຄ້າ
ພະແນກ ອຸດສາຫະກຳ ແລະ ການຄ້າ
ແຂວງຈຳປາສັກ

ສຸກດາວັນ ແສນທະວີສຸກ

ຜູ້ປະສານ:
ນາງ ລັດສະໝີ ພຸດທະວົງ
020 7842 0352

สแกนด้วย CamScanner